**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ

# ບົດລາຍງານ

ຮຽນ: ທ່ານ.................................................................

ຫົວຂໍ້: ການເຮັດທົດລອງວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດດ້ວຍລະບົບທັນສະໄໝ ຂອງກອງບັນຊາການ ປ້ອງກັນຄວາມສະຫງົບນະຄອນຫຼວງ.

- ອີງຕາມລັດຖະບັນຍັດຂອງປະທານປະເທດ, ສະບັບເລກທີ 002/ປປທ, ລົງວັນທີ 17 ມີຖຸນາ 2021,
- ອີງຕາມຄໍາແນະນໍາ ຂອງກະຊວງປ້ອງກັນຄວາມສະຫງົບກ່ຽວກັບການຜັນຂະຫຍາຍເກັບຄ່າທໍານຽມ ແລະ ຄ່າບໍລະການ ໃນຂະແໜງການປ້ອງກັນຄວາມສະຫງົບ,ສະບັບເລກທີ 05/ປກສ, ລົງວັນທີ 23 ກຸມພາ 2022;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 653/ປກສ, ລົງວັນທີ 8/5/2012 ວ່າດ້ວຍການຄຸ້ມຄອງອາຊີບ-ພາຫະນະພິເສດ;
- ໜັງສືແຈ້ງການ ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 07/ຫວນວ, ລົງວັນທີ 7 ກຸມພາ 2024 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ ຕິດພັນກັບການເກັບລາຍຮັບ;

ໂດຍຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 653/ປກສ, ລົງວັນທີ 8 ພຶດສະພາ 2012 ວ່າດ້ວຍການຄຸ້ມຄອງອາຊີບ-ພາຫະນະພິເສດໃນ 24 ລາຍການ ແລະ 14 ຫົວໜ່ວຍທີ່ຈະຕ້ອງໄດ້ເກັບຄ່າທໍານຽມ ແລະ ຄ່າບໍລິການໃນຂະແໜງການປ້ອງກັນຄວາມສະຫງົບຕາມຄໍາແນະນໍາເລກທີ 05/ປກສ ໃຫ້ເຂົ້າສູ່ລະບົບການຄຸ້ມຄອງດ້ວຍກົດໝາຍ ແລະ ລະບຽບການ ແຕ່ໃນໄລຍະຜ່ານມາແມ່ນຍັງເຮັດບໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຮູບປະທໍາເທື່ອຈຶ່ງເຮັດໃຫ້ເກີດມີປະກົດການຫຍໍ້ທໍ້ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ອີກດ້ານໜຶ່ງກໍ່ເຮັດໃຫ້ເກີດຜົນເສຍຫາຍຕໍ່ການການລາຍຮັບເຂົ້າງົບປະມານເຂົ້າລັດ.

ຈາກສະພາບດັ່ງກ່າວເພື່ອເປັນການຈັດຕັ້ງຜັນຂະຫຍາຍວຽກງານດັ່ງກ່າວ ຫ້ອງຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ ແລະ ຫ້ອງພາລາ ຂອງ ປກສ ນະຄອນຫຼວງວຽງຈັນ ໃນຖານະເປັນເສນາທິການໃຫ້ຄະນະພັກ-ຄະນະບັນຊາ ກອງບັນຊາການ ປ້ອງກັນຄວາມສະຫງົບນະຄອນຫຼວງ ຈຶ່ງຄົ້ນຄວ້າປຶກສາເປັນເອກະພາບແລ້ວລາຍງານຂໍທິດຊີ້ນໍາ ຈາກຄະນະພັກ-ຄະນະກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ມີຄວາມເປັນເອກະພາບກັນແລ້ວຈຶ່ງໄດ້ເຮັດບົດລາຍງານເຖິງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍອະນຸມັດເປີດກອງປະຊຸມຮ່ວມກັບພະແນກການອ້ອມຂ້າງນະຄອນຫຼວງວຽງຈັນ, ໄດ້ຮັບເອກະສານແຈ້ງຕອບເປັນທາງການຂອງຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ສະບັບເລກທີ 2092/ຫວນວ, ລົງວັນທີ 27 ຕຸລາ 2023 ແລ້ວກໍ່ໄດ້ກອງປະຊຸມຮ່ວມກັບພະແນການອ້ອມຂ້າງນະຄອນຫຼວງວຽງຈັນ ຄັ້ງວັນທີ 21 ທັນວາ 2023 ໃນກອງປະຊຸມແມ່ນເຫັນດີເອກະພາບໃຫ້ຈັດຕັ້ງປະຕິບັດຈັດເກັບລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ ຕາມລັດຖະບັດຍັດ 002/ປປທ ພາຍຫຼັງສໍາເລັດກອງປະຊຸມແລ້ວກໍ່ໄດ້ເຮັດບົດລາຍງານຜົນຂອງກອງປະຊຸມຕໍ່ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຂໍທິດຊີ້ນໍາໃນທາງຈັດຕັ້ງປະຕິບັດ. ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ໄດ້ຮັບແຈ້ງການຈາກຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ສະບັບເລກທີ 07/ຫວນວ, ລົງວັນທີ 7 ກຸມພາ 2024 ດ້ານການຈັດຕັ້ງແມ່ນເຫັນດີ, ແຕ່ໃຫ້

ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ເປີດກອງປະຊຸມປຶກສາຫາລືກັບພະແນກການອອົມຂ້າງຂອງອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອເອກະພາບທາງດ້ານຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດໂດຍໃຫ້ ປກສ ນະຄອນຫຼວງວຽງຈັນເປັນເຈົ້າການສ້າງເປັນບົດບັນທຶກຮ່ວມກັບພະແນກອອົມຂ້າງແລ້ວຂໍທິດນຳອົງການປົກຄອງນະຄອນຫຼວງວຽງຈັນ ເພື່ອເລີ່ມຈັດຕັ້ງປະຕິບັດ ປະຈຸບັນເອກະສານດັ່ງກ່າວຍັງຢູ່ຂັ້ນຕອນຜ່ານອົງການປົກຄອງນະຄອນຫຼວງວຽງຈັນ.

ຄຽງຄູ່ກັບການກະກຽມທາງດ້ານນິຕິກຳ ແລະ ແຜນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ໄດ້ຮັບໜັງສືເຈດຈຳນົງຈາກບໍລິສັດໄຊສະມາດເທັກຈຳກັດຜູ້ດຽວເພື່ອຂໍເຊັນສັນຍາຮ່ວມມືໃນການຄຸ້ມຄອງຂະແໜງການອາຊີບ-ພະຫະນະພິເສດ ດ້ວຍລະບົບທັນສະໄໝ ຕາມສັນຍາ ສະບັບເລກທີ 298/ປກສ ນວ, ລົງວັນທີ 20 ພຶດສະພາ 2024 ວ່າດ້ວຍການສ້າງລະບົບຄຸ້ມຄອງອາຊີບ-ພາຫະນະພິເສດ.

ເບື້ອງຕົ້ນໄດ້ເລີ່ມທົດລອງໂດຍຄັດເລືອກເອົາຮ້ານເກມ 65 ຮ້ານເຮັດທົດລອງຄຸ້ມຄອງດ້ວຍລະບົບທັນສະໄໝຄຸ້ມຄອງອາຊີບ-ພາຫະນະພິເສດ ໂດຍເລີ່ມເຮັດບົດບັນທຶກ ແລະ ຕິດຕັ້ງລະບົບການຕິດຕາມການເຄື່ອນໄຫວຂອງຮ້ານດັ່ງກ່າວແຕ່ວັນທີ 27 ມິຖຸນາ ຫາ 05 ກັນຍາ 2024 ໄດ້ເຮັດບົດບັນທຶກກັບຮ້ານທີ່ເຂົ້າຮ່ວມເຮັດທົດລອງ ແລະ ຕິດຕັ້ງກ້ອງວົງຈອນປິດສຳເລັດ 55ຮ້ານ ພ້ອມທັງຕິດຕາມການເຄື່ອນໄຫວຂອງ 55ຮ້ານ; ສ່ວນ 10ຮ້ານແມ່ນບໍ່ໄດ້ເຮັດບົດບັນທຶກ ແລະ ຕິດຕັ້ງກ້ອງເທື່ອ.

ມາຮອດວັນທີ20 ກັນຍາ 2024 ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ໄດ້ຮັບທິດຊີ້ນຳຈາກກະຊວງປ້ອງກັນຄວາມສະຫງົບຕໍ່ກັບການເຄື່ອນໄຫວຮ່ວມມືກັບບໍລິສັດໄຊສະມາດເທັກ ຈຳກັດຜູ້ດຽວແມ່ນເຫັນວ່າບໍ່ທັນສອດຄ່ອງກັບນິຕິກຳຂອງກະຊວງປ້ອງກັນຄວາມສະຫງົບ ກອງບັນຊາການຈຶ່ງຊີ້ນຳຫ້ອງພາລາ ແລະ ຫ້ອງສຳນະໂນຄົວໃຫ້ແຈ້ງໃຫ້ບໍລິສັດເຂົ້າມາເພື່ອໂຈະການເຮັດທົດລອງ ແລະ ຢຸດຕິການຮ່ວມມືກັບບໍລິສັດສະເພາະຮ້ານເກມ ເພາະຂັດກັບ ແຈ້ງການ ສະບັບເລກທີ 27/ປກສ, ລົງວັນທີ 07 ມິຖຸນາ 2023 ແລະ ຂັດກັບກົດໝາຍອື່ນ;, ສ່ວນອີກ 13 ລາຍການໃນຂະແໜງອາຊີບ-ພະຫະນະພິເສດ ແມ່ນໃຫ້ເຊີນບໍບີສັດມາປຶກສາຫາລືສຶກສາດ້ານຄວາມເປັນໄປໄດ້ທີ່ຈະເອົາເຂົ້າລະບົບການຄຸ້ມຄອງດ້ວຍລົບທັນສະໄໝຕໍ່ຫຼືບໍ.

ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ໄດ້ອອກແຈ້ງການ ສະບັບເລກທີ 978/ຫວກ, ລົງວັນທີ 06 ພະຈິກ 2024 ໃຫ້ລົບລ້າງ-ຢຸດໂຈະການດຳເນີນກິດຈະການ ບັນດາຮ້ານອິນເຕີເນັດຄາເຟ ຈຳນວນ 65 ຮ້ານ ມອບໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ປະຕິບັດຄື:

1. ໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ສຶກສາຄືນຮ່ວມມືກັບ ບໍລິສັດໄຊສະມາດເທັກ ຈຳກັດຜູ້ດຽວ ຖ້າການດຳເນີນກິດຈະການໃດ ຫາກຂັດກັບນິຕິກຳຂອງກະຊວງປ້ອງກັນຄວາມສະຫງົບ ວາງອອກແລ້ວ ກໍ່ໃຫ້ລົບລ້າງ ຫຼື ໂຈະ, ຖ້າວ່າວຽກໃດ ກິດຈະກຳໃດ ຫາກບໍ່ຂັດກັບນິຕິກຳຂອງກະຊວງປ້ອງກັນຄວາມສະຫງົບກໍ່ໃຫ້ຮ່ວມກັນສຶກສາດຳເນີນກິດຈະການ ແຕ່ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບ ຈັດຕັ້ງປະຕິບັດຕາມຂັ້ນຕອນ ໂດຍໃຫ້ນຳສະເໜີຂໍອະນຸມັດຈາກສາຍຕັ້ງ, ສາຍຂວາງກ່ອນ.

2. ໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ຕ້ອງໄດ້ແຈ້ງເຊີນບໍລິສັດໄຊສະມາດເທັກ ຈຳກັດຜູ້ດຽວມາແນະໃຫ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບການເຄື່ອນໄຫວທີ່ບໍ່ຖືກຕ້ອງດັ່ງກ່າວ ພ້ອມທັງເຮັດບົດບັນທຶກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດມາດຕະການຕ່າງໆ.

3. ໃຫ້ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ສົມທົບກັບພະແນກເຕັກໂນໂລຊີ ແລະ ການສື່ສານນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາບັນດາຮ້ານອິນເຕີເນັດຄາເຟ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ ພ້ອມທັງເຮັດບົດບັນທຶກໃຫ້ຢຸດເຊົາບໍລິການ ຖ້າພົບເຫັນ ຫຼື ຝ່າຝືນ ແມ່ນໃຫ້ດຳເນີນມາດຕະການຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

ທັດສະນະຂອງກອງບັນຊາການ ປກສ ນະຄອນຫຼວງວຽງຈັນ ກໍຄືຫ້ອງວິຊາສະເພາະທີ່ຈັດຕັ້ງປະຕິບັດຕົວຈິງ ແມ່ນເຫັນດີໂຈະການເຄື່ອນໄຫວຢ່າງເຂັ້ມງວດ ແລະ ຂໍທິດຊີ້ນຳໃນຈັດຕັ້ງປະຕິບັດຈາກອົງການປົກຄອງນະຄອນຫຼວງວຽງຈັນດ້ວຍ.